**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງບໍລິຄໍາໄຊ ເລກທີ 578 /ຂບຊ

ບໍລິຄໍາໄຊ, ວັນທີ 20 ກັນຍາ 2022

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງການລົງທຶນ
# ດ້ານກະສິກໍາຕາມຮູບແບບສັນຍາ ຂອງແຂວງບໍລິຄໍາໄຊ

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68 /ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ (ປັບປຸງ) ກົດໝາຍ ວ່າດ້ວຍການສ້າງນິຕິກໍາ ສະບັບເລກທີ 06 /ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14 /ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ (ປັບປຸງ) ກົດໝາຍ ວ່າດ້ວຍທີ່ດິນ ສະບັບເລກທີ 70 /ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍກະສິກໍາ ສະບັບເລກທີ 01 /98 ສພຊ, ລົງວັນທີ 10 ຕຸລາ 1998;
- ອີງຕາມ ຄໍາແນະນໍາ ກ່ຽວກັບການພິຈາລະນາອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງທີ່ດິນ ໃຫ້ເຊົ່າ ຫຼື ສໍາປະທານ ສໍາລັບການປູກພືດກະສິກໍາ ສະບັບເລກທີ 0457 /ກຜທ, ລົງວັນທີ 27 ກຸມພາ 2019;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ່ II ສະບັບເລກທີ 67 /ສພຂ.ບຊ, ລົງວັນທີ 29 ສິງຫາ 2022.

## ເຈົ້າແຂວງ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງການລົງທຶນດ້ານກະສິກໍາ ຕາມຮູບແບບສັນຍາ ເພື່ອເຮັດໃຫ້ການລົງທຶນດັ່ງກ່າວ ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ ແນໃສ່ເຮັດໃຫ້ເນື້ອທີ່ດິນໄດ້ຮັບການພັດທະນາ ຮັບປະກັນການຜະລິດກະສິກໍາຕາມມາດຕະຖານກະສິກໍາສະອາດເປັນສິນຄ້າ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງບໍລິຄໍາໄຊ.

**ມາດຕາ 2 (ປັບປຸງ) ຄວາມໝາຍການຄຸ້ມຄອງການລົງທຶນດ້ານກະສິກໍາຕາມຮູບແບບສັນຍາ**

ການຄຸ້ມຄອງການລົງທຶນດ້ານກະສິກໍາຕາມຮູບແບບສັນຍາ ແມ່ນການຄຸ້ມຄອງຂອງລັດຕໍ່ບຸກຄົນ ນິຕິບຸກຄົນ ແລະ ຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ໂດຍມີສ່ວນຮ່ວມຂອງເຈົ້າຂອງເນື້ອທີ່ດິນກະສິກໍາ ຕາມຮູບແບບສັນຍາ, ທີ່ໄດ້ຮັບສິດນໍາໃຊ້ເນື້ອທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ແລະ ໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານ.

**ມາດຕາ 3 (ປັບປຸງ) ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. ກະສິກຳ: ໝາຍເຖິງ ການປູກຝັງ, ລ້ຽງສັດ, ການປະມົງ ເພື່ອຕອບສະໜອງທາງດ້ານອາຫານ ແລະ ທັນຍາຫານ ໃຫ້ແກ່ສັງຄົມ, ເປັນວັດຖຸດິບປ້ອນໂຮງງານອຸດສາຫະກຳ ແລະ ອຸດສາຫະກຳປຸງແຕ່ງ ລວມທັງ ສິນຄ້າຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ;

2. ຜູ້ລົງທຶນ: ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດທີ່ຈົດທະບຽນດຳເນີນທຸລະກິດ ຖືກຕ້ອງຕາມກົດໝາຍຂອງ ສປປ ລາວ;

3. ເຕັກນິກ-ວິຊາການ: ໝາຍເຖິງ ການຄວບຄຸມຂະບວນການຜະລິດພືດນັ້ນໆ ນັບແຕ່ການຄັດເລືອກ ແນວພັນ, ດິນ, ການປູກ, ການລ້ຽງ, ການປົວລະບັດຮັກສາ, ການເກັບກ່ຽວ, ການປຸງແຕ່ງໃຫ້ໄດ້ຕາມ ມາດຕະຖານທີ່ໄດ້ກຳນົດໄວ້;

4. ມາດຕະຖານ: ໝາຍເຖິງ ການກຳນົດລັກສະນະສະເພາະຂອງຜະລິດຕະພັນ, ສິນຄ້າການບໍລິການ, ສິ່ງແວດລ້ອມ ແລະ ຂະບວນການຜະລິດທີ່ກ່ຽວຂ້ອງກັບຄຸນນະພາບຜົນຜະລິດ;

5. ການຜະລິດກະສິກຳສະອາດ: ໝາຍເຖິງ ລະບົບການຜະລິດກະສິກຳທີ່ດີ " GAP " Good Agriculture Practice, ກະສິກຳອິນຊີ " OA " Organic Agriculture ການຜະລິດກະສິກຳອິນຊີ ເຊິ່ງ ການຜະລິດກະສິກຳທີ່ດີ ຕ້ອງມີວິທີປ້ອງກັນ ຫຼື ຫຼຸດຜ່ອນຄວາມສ່ຽງທີ່ເປັນອັນຕະລາຍອາດຈະເກີດຂຶ້ນໃນ ຂະບວນການຜະລິດ, ການເກັບກ່ຽວ, ຫຼັງການເກັບກ່ຽວ ແລະ ການຜະລິດກະສິກຳອິນຊີ ການຜະລິດຕົວຈິງ ແມ່ນບໍ່ນຳໃຊ້ຝຸ່ນເຄມີ, ສານເຄມີໃນການປ້ອງກັນການຈຳກັດສັດຕູພືດ;

6. ສິ່ງແວດລ້ອມ: ໝາຍເຖິງ ສັບພະສິ່ງທັງປວງທີ່ມີຊີວິດ ແລະ ບໍ່ມີຊີວິດ, ເຊິ່ງເກີດຂຶ້ນຕາມທຳມະຊາດ ຫຼື ມະນຸດສ້າງຂຶ້ນຢູ່ບໍລິເວນເປົ້າໝາຍໃດໜຶ່ງເຊັ່ນ: ດິນ, ສັດ, ພືດ ແລະ ອື່ນໆທີ່ມີສາຍກ່ຽວພັນ ແລະ ສົ່ງຜົນ ສະທ້ອນເຊິ່ງກັນ ແລະ ກັນໃນທາງບວກ ແລະ ທາງລົບຕໍ່ການດຳລົງຊີວິດ, ການຜະລິດ, ການຄົງຕົວ ແລະ ການຂະຫຍາຍຕົວຂອງມະນຸດ ແລະ ທຳມະຊາດ;

7. ສິດນຳໃຊ້ທີ່ດິນຂອງບຸກຄົນ: ໝາຍເຖິງ ສິດນຳໃຊ້ທີ່ດິນຂອງພົນລະເມືອງລາວ ຊຶ່ງມີໃບຕາດິນ ຖືກຕ້ອງຕາມກົດໝາຍ;

8. ໃບຕາດິນ : ໝາຍເຖິງ ເອກະສານທີ່ເປັນຫຼັກຖານຕົ້ນຕໍອັນໜຶ່ງອັນດຽວກ່ຽວກັບສິດນຳໃຊ້ທີ່ດິນ;

9. ໃບແຈ້ງເນື້ອທີ່ດິນ : ໝາຍເຖິງ ການຂຶ້ນສຳມະໂນທີ່ດິນ ໃນການເກັບກຳສະຖິຕິຕອນດິນປະເພດ ຕ່າງໆ ເພື່ອຕິດຕາມສະພາບການເຄື່ອນໄຫວ, ປ່ຽນແປງເປົ້າໝາຍການນຳໃຊ້ທີ່ດິນ ແລະ ເປັນຂໍ້ມູນພື້ນຖານ ໃນການອອກໃບຕາດິນ ແລະ ເສຍຄ່າທຳນຽມນຳໃຊ້ທີ່ດິນ;

10. ລັດຄຸ້ມຄອງ: ໝາຍເຖິງ ລັດເປັນຜູ້ອະນຸມັດ, ອຳນວຍຄວາມສະດວກ, ຕິດຕາມ ກວດກາ, ຊຸກ ຍູ້ - ສົ່ງເສີມ ຕາມລະບຽບການ ເພື່ອໃຫ້ການຜະລິດກະສິກຳເປັນສິນຄ້າໄດ້ຮັບຜົນດີ;

11. ເນື້ອທີ່ດິນ: ໝາຍເຖິງ ເນື້ອທີ່ດິນ ທີ່ປະຊາຊົນ ນຳໃຊ້ເຂົ້າໃນການຜະລິດກະສິກຳ ໂດຍໄດ້ຮັບສິດນຳ ໃຊ້ (ມີໃບຕາດິນ) ແລະ ດິນຕາມປະເພນີ (ຕາມມາດຕາ 130 ຂອງກົດໝາຍ ວ່າດ້ວຍທີ່ດິນ ສະບັບປັບປຸງ);

12. ແຮງງານ: ໝາຍເຖິງ ກຳລັງແຮງງານ ການຜະລິດກະສິກຳຂອງປະຊາຊົນ ແລະ ວິຊາການ ທີ່ນຳໃຊ້ ເຂົ້າໃນການເຮັດວຽກ ເພື່ອຜະລິດກະສິກຳເປັນສິນຄ້າ;

13. ທຶນ: ໝາຍເຖິງ ເງິນທີ່ຜູ້ລົງທຶນນຳໃຊ້ເຂົ້າໃນການຜະລິດກະສິກຳ;

14. ແນວພັນ: ໝາຍເຖິງ ເມັດພັນ, ທ່ອນພັນ, ກິ່ງກ້ານ, ເຫງົ້າ, ເບ້ຍ ແລະ ລູກສັດ, ລູກປາ ແລະ ອື່ນໆ ທີ່ໄດ້ຜ່ານຂະບວນການຄັດເລືອກ ເພື່ອໃຫ້ເປັນແນວພັນໃນການປູກ ແລະ ການລ້ຽງ;

15. ປັດໄຈການຜະລິດ: ໝາຍເຖິງ ວັດຖຸອຸປະກອນ, ກົນຈັກ, ຝຸ່ນ, ປຸ໋ຍ, ຢາປາບສັດຕູພືດ, ຢາວັກຊິນ, ຢາປົວພະຍາດສັດ ແລະ ອາຫານສັດ ເພື່ອນຳໃຊ້ເຂົ້າໃນການຜະລິດກະສິກຳ;

16. ຕະຫຼາດ: ໝາຍເຖິງ ສະຖານທີ່ຈຳໜ່າຍຜົນຜະລິດ ຢູ່ພາຍໃນ ແລະ ຕ່າງປະເທດ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ**

ລັດສົ່ງເສີມບຸກຄົນ, ນິຕິບຸກຄົນ, ຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດປະກອບສ່ວນເຂົ້າໃນການລົງທຶນດ້ານກະສິກຳ ຕາມຮູບແບບສັນຍາ ດ້ວຍການວາງນະໂຍບາຍ ແລະ ອຳນວຍຄວາມສະດວກ ຕາມກົດໝາຍ;

ລັດປົກປ້ອງສິດ ແລະ ຮັບປະກັນຜົນປະໂຫຍດອັນຊອບທຳຂອງຜູ້ລົງທຶນ, ຜູ້ອອກແຮງງານ, ຜູ້ໄດ້ຮັບສິດນຳໃຊ້ເນື້ອທີ່ດິນກະສິກຳຕາມກົດໝາຍ ແນໃສ່ເຮັດໃຫ້ເກີດມີຂະບວນການຜະລິດກະສິກຳຕາມມາດຕະຖານກະສິກຳສະອາດ ກາຍເປັນສິນຄ້າ ແລະ ມີປະສິດທິຜົນ;

ລັດຊຸກຍູ້ສົ່ງເສີມການຜະລິດຂອງຊາວກະສິກອນໃຫ້ເຂັ້ມແຂງ, ສ້າງລາຍຮັບ, ຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນ, ແນໃສ່ແກ້ໄຂຄວາມທຸກຍາກໃຫ້ປະຊາຊົນ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແບບຍືນຍົງ ຂອງແຂວງບໍລິຄຳໄຊ.

**ມາດຕາ 5 (ປັບປຸງ) ຫຼັກການຄຸ້ມຄອງການລົງທຶນດ້ານກະສິກຳ ຕາມຮູບແບບສັນຍາ**

ການຄຸ້ມຄອງການລົງທຶນດ້ານກະສິກຳຕາມຮູບແບບສັນຍາ ຕ້ອງຮັບປະກັນຕາມຫຼັກການດັ່ງນີ້:

1. ໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ວິໄສທັດຍຸດທະສາດ ແລະ ແຜນພັດທະນາເສດຖະກິດ - ສັງຄົມຂອງແຂວງ ແລະ ເມືອງ ທີ່ວາງອອກໃນແຕ່ລະໄລຍະ ເພື່ອຍົກສູງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ;

2. ຮັບປະກັນກົນໄກປະສານງານຄຸ້ມຄອງ ຂອງລັດຢ່າງລວມສູນ ເປັນເອກະພາບທົ່ວແຂວງ;

3. ຮັບປະກັນ ໃນການຄຸ້ມຄອງຂອງລັດ, ການມີສ່ວນຮ່ວມຂອງປະຊາຊົນ ແລະ ຜູ້ລົງທຶນໃນການນຳໃຊ້ເນື້ອທີ່ດິນກະສິກຳ ເພື່ອຜະລິດກະສິກຳ ຕາມມາດຕະຖານສະອາດເປັນສິນຄ້າ, ການນຳໃຊ້ຊັບພະຍາກອນທຳມະຊາດຕາມທິດສະອາດ, ສີຂຽວ ແລະ ຍືນຍົງ;

4. ຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ການປົກປ້ອງສິດ, ຜົນປະໂຫຍດການນຳໃຊ້ແຮງງານພາຍໃນ ຫຼື ຕ່າງປະເທດ ໃຫ້ຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ;

5. ຮັບປະກັນຄວາມຖືກຕ້ອງ, ໂປ່ງໃສ, ຍຸຕິທຳ, ມີຂໍ້ມູນຫຼັກຖານ ແລະ ສາມາດກວດສອບໄດ້.

**ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດທີ່ເຂົ້າມາເຄື່ອນໄຫວ ດຳເນີນທຸລະກິດລົງທຶນດ້ານກະສິກຳຕາມຮູບແບບສັນຍາ ຢູ່ແຂວງບໍລິຄຳໄຊ.

## ໝວດທີ 2
## ອົງປະກອບ, ຮູບແບບ ແລະ ເນື້ອໃນສັນຍາ

**ມາດຕາ 7 (ໃໝ່) ອົງປະກອບ ຂອງການລົງທຶນ**

ການລົງທຶນດ້ານກະສິກຳ ຕາມຮູບແບບສັນຍາ ມີ 6 ອົງປະກອບດັ່ງນີ້:

1. ລັດຄຸ້ມຄອງ;
2. ເນື້ອທີ່ດິນ;
3. ແຮງງານ;
4. ທຶນ, ແນວພັນ ແລະ ປັດໄຈການຜະລິດ;
5. ເຕັກນິກ - ວິຊາການ;
6. ຕະຫຼາດ.

**ມາດຕາ 8 (ໃໝ່) ຮູບແບບສັນຍາ**

ຮູບແບບສັນຍາ ປະກອບມີ 3 ຮູບແບບຄື:

1. ຮູບແບບ 1+2+3;
2. ຮູບແບບ 1+1+4;
3. ຮູບແບບ 1+4+1.

**ມາດຕາ 9 (ໃໝ່) ຮູບແບບ 1+2+3**

ຮູບແບບ 1+2+3 ມີເນື້ອໃນດັ່ງນີ້:

(1): ການຄຸ້ມຄອງຂອງລັດ: ລັດເປັນຜູ້ອະນຸມັດ, ອຳນວຍຄວາມສະດວກ, ຕິດຕາມ ກວດກາ, ຊຸກຍູ້ - ສົ່ງເສີມ ຕາມລະບຽບການ ເພື່ອໃຫ້ການຜະລິດກະສິກຳເປັນສິນຄ້າໄດ້ຮັບຜົນດີ;

(2): ປະຊາຊົນປະກອບສ່ວນ: ເນື້ອທີ່ດິນທີ່ຖືກຕ້ອງຕາມກົດໝາຍ ແລະ ການມີສ່ວນຮ່ວມໃນການອອກແຮງງານຕາມຂະບວນການຜະລິດ;

(3): ຜູ້ລົງທຶນຮັບຜິດຊອບຄື: ທຶນ, ແນວພັນ, ປັດໄຈການຜະລິດ, ເຕັກນິກ-ວິຊາການ ແລະ ຕະຫຼາດ.

**ມາດຕາ 10 (ໃໝ່) ຮູບແບບ 1+1+4**

ຮູບແບບ 1+1+4 ມີເນື້ອໃນດັ່ງນີ້:

(1): ການຄຸ້ມຄອງຂອງລັດ: ລັດເປັນຜູ້ອະນຸມັດ, ອຳນວຍຄວາມສະດວກ, ຕິດຕາມ ກວດກາ, ຊຸກຍູ້ - ສົ່ງເສີມ ຕາມລະບຽບການ ເພື່ອໃຫ້ການຜະລິດກະສິກຳເປັນສິນຄ້າໄດ້ຮັບຜົນດີ;

(1): ປະຊາຊົນປະກອບສ່ວນຄື: ມີເນື້ອທີ່ດິນທີ່ຖືກຕ້ອງຕາມກົດຫມາຍ;

(4): ຜູ້ລົງທຶນໂດຍກົງຄື: ທຶນ, ແນວພັນ, ປັດໄຈການຜະລິດ ເຕັກນິກ-ວິຊາການ, ມີການຈ້າງແຮງງານເຂົ້າໃນຂະບວນການຜະລິດ ແລະ ຕະຫຼາດ.

**ມາດຕາ 11 (ໃໝ່) ຮູບແບບ 1+4+1**

ຮູບແບບ 1+4+1 ມີເນື້ອໃນດັ່ງນີ້:

(1): ການຄຸ້ມຄອງຂອງລັດ: ລັດເປັນຜູ້ອະນຸມັດ, ອຳນວຍຄວາມສະດວກ, ຕິດຕາມ ກວດກາ, ຊຸກຍູ້ - ສົ່ງເສີມ ຕາມລະບຽບການ ເພື່ອໃຫ້ການຜະລິດກະສິກຳເປັນສິນຄ້າໄດ້ຮັບຜົນດີ;

(4): ປະຊາຊົນປະກອບສ່ວນຄື: ມີໃບແຈ້ງເນື້ອທີ່ດິນ, ດິນຕາມປະເພນີ (ຕາມທີ່ກຳນົດໄວ້ໃນມາດຕາ 15, ຂໍ້ 2 ຂອງຂໍ້ຕົກລົງສະບັບນີ້), ມີທຶນ, ແນວພັນ, ປັດໄຈການຜະລິດ, ມີເຕັກນິກ-ວິຊາການ ແລະ ມີແຮງງານ ເຂົ້າໃນຂະບວນການຜະລິດ;

(1): ຜູ້ລົງທຶນໂດຍກົງຄື: ຕະຫຼາດ.

**ມາດຕາ 12 (ໃໝ່) ເນື້ອໃນສັນຍາ**

ການລົງທຶນດ້ານກະສິກຳ ຕາມຮູບແບບສັນຍາ ມີ 5 ເນື້ອໃນສັນຍາດັ່ງນີ້:

1. ຄ່າເຊົ່າທີ່ດິນ;
2. ຄ່າຈ້າງແຮງງານ;
3. ການຮ່ວມທຶນ;
4. ລາຄາຊື້ - ຂາຍຜົນຜະລິດ ແລະ ການຄ້ຳປະກັນລາຄາ;
5. ຄຸນນະພາບຜົນຜະລິດ ແລະ ແນວພັນ.

## ໝວດທີ 3
## ເງື່ອນໄຂການລົງທຶນ ແລະ ຂັ້ນຕອນການພິຈາລະນາ

**ມາດຕາ 13 ເງື່ອນໄຂການລົງທຶນ**

1. ເງື່ອນໄຂຂອງລັດ;
2. ເງື່ອນໄຂຂອງປະຊາຊົນ;
3. ເງື່ອນໄຂຂອງຜູ້ລົງທຶນ.

**ມາດຕາ 14 (ປັບປຸງ) ເງື່ອນໄຂຂອງລັດ**

1. ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາລົງທຶນ ອຳນວຍຄວາມສະດວກໃຫ້ແກ່ການລົງທຶນ ຕາມກົດໝາຍ ແລະ ລະບຽບການ;

2. ເຈົ້າແຂວງອອກຂໍ້ຕົກລົງອະນຸມັດການລົງທຶນໃຫ້ຜູ້ລົງທຶນຕາມກົດໝາຍ ແລະ ລະບຽບການ;

3. ຂະແໜງການ ອອກຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາການຈັດຕັ້ງປະຕິບັດຂອງໂຄງການ;

4. ຂະແໜງການກ່ຽວຂ້ອງສ້າງລະບຽບການໃນການຄຸ້ມຄອງ ຕາມເຕັກນິກຕາມມາດຕະຖານການຜະລິດກະສິກຳສະອາດ ແລະ ສິ່ງແວດລ້ອມ.

**ມາດຕາ 15 (ປັບປຸງ) ເງື່ອນໄຂຂອງປະຊາຊົນ**

ປະຊາຊົນທີ່ສະໝັກໃຈເຂົ້າຮ່ວມການລົງທຶນດ້ານກະສິກຳຕາມຮູບແບບສັນຍາ ຕ້ອງມີເງື່ອນໄຂດັ່ງນີ້:

1. ເນື້ອທີ່ດິນທີ່ມີສິດນຳໃຊ້ຖືກຕ້ອງຕາມກົດໝາຍ (ມີໃບຕາດິນ), ສາມາດເຂົ້າຮ່ວມ ໃນຮູບແບບສັນຍາ 1+2+3 ແລະ ຮູບແບບ 1+1+4;

2. ເນື້ອທີ່ດິນ ທີ່ມີໃບແຈ້ງເນື້ອທີ່ດິນ, ດິນຕາມປະເພນີ ແຕ່ເປັນດິນຂອງຜູ້ກ່ຽວນຳໃຊ້ຢ່າງຕໍ່ເນື່ອງ ແລະ ມີຄວາມສະຫງົບ ມາເປັນເວລາຫຼາຍກວ່າ 20 ປີ (ຕາມທີ່ລະບຸໄວ້ໃນກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019. ມາດຕາ 130 ການໄດ້ສິດນຳໃຊ້ເນື້ອທີ່ດິນຕາມປະເພນີ) ແຕ່ຕ້ອງໄດ້ຮັບການເຫັນດີຈາກພາກສ່ວນທີ່ກ່ຽວຂ້ອງ, ຢັ້ງຢືນຈາກອົງການປົກຄອງບ້ານ, ເຈົ້າຂອງດິນຂ້າງຄຽງບ່ອນດິນຕັ້ງຢູ່ (ຕ້ອງບໍ່ນອນໃນເຂດສະຫງວນຂອງລັດ ແລະ ຂອບເຂດ 3 ປະເພດປ່າ) ແມ່ນສາມາດເຂົ້າຮ່ວມ ການຜະລິດກະສິກຳເປັນສິນຄ້າ ຕາມຮູບແບບ 1+4+1 (ໃນກໍລະນີນີ້ ເຈົ້າຂອງເນື້ອທີ່ດິນດັ່ງກ່າວ ບໍ່ມີສິດເກັບຄ່າເຊົ່າທີ່ດິນ ນຳຜູ້ລົງທຶນ) ແລະ ເຈົ້າຂອງທີ່ດິນ ຕ້ອງໄດ້ສະເໜີຫາຂະແໜງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອຂໍອອກໃບຕາດິນໃຫ້ຖືກຕ້ອງຕາມກົດໝາຍ;

3. ແຮງງານ: ຕ້ອງແມ່ນແຮງງານເຈົ້າຂອງດິນ ທີ່ສາມາດອອກແຮງງານເຂົ້າໃນຂະບວນການຜະລິດຕົວຈິງ ໃນກໍລະນີເຈົ້າຂອງເນື້ອທີ່ດິນບໍ່ມີແຮງງານ ແມ່ນສາມາດຈ້າງແຮງງານທາງນອກມາອອກແຮງງານແທນ ໂດຍສັນຍາຈ້າງແຮງງານ ຢ່າງລະອຽດຕາມກົດໝາຍ.

**ມາດຕາ 16 (ປັບປຸງ) ເງື່ອນໄຂຂອງຜູ້ລົງທຶນ**

1. ຜູ້ລົງທຶນຕ້ອງມີຖານະທາງດ້ານການເງິນ ຫຼື ແຫຼ່ງທຶນ ຊຶ່ງໄດ້ຮັບການຢັ້ງຢືນຈາກສະຖາບັນການເງິນພາຍໃນ ຫຼື ຕ່າງປະເທດ;

2. ຕ້ອງມີເຕັກນິກ-ວິຊາການ, ມີການຄວບຄຸມຂະບວນການຜະລິດພືດນັ້ນໆ ນັບແຕ່ການຄັດເລືອກແນວພັນ, ດິນ, ການປູກ, ການບົວລະບັດຮັກສາ, ການເກັບກ່ຽວ, ການປຸງແຕ່ງໃຫ້ໄດ້ຕາມມາດຕະຖານທີ່ໄດ້ກຳນົດໄວ້;

3. ມີຕະຫຼາດຮອງຮັບຜົນຜະລິດ ຮັບປະກັນດ້ານລາຄາ ແລະ ການເກັບຊື້ຜົນຜະລິດ ຄືນຈາກປະຊາຊົນທີ່ເຂົ້າຮ່ວມໂຄງການລົງທຶນດ້ານກະສິກຳ ຕາມຮູບແບບສັນຍາ;

4. ບຸກຄົນ, ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍ (ມີທະບຽນວິສະຫະ

ກິດ, ທະບຽນອາກອນ, ໃບອະນຸຍາດດຳເນີນກິດຈະການ ຈາກຂະແໜງການກ່ຽວຂ້ອງ ແລະ ອື່ນໆ);

5. ເປັນຜູ້ທີ່ມີເປົ້າໝາຍໃນການລົງທຶນ ເພື່ອສົ່ງເສີມການຜະລິດກະສິກຳສະອາດ ເປັນສິນຄ້າໂດຍມີສ່ວນຮ່ວມໃນການນຳໃຊ້ເນື້ອທີ່ດິນກະສິກຳ ແລະ ແຮງງານຂອງປະຊາຊົນ ຕາມແຜນຈັດສັນ ແລະ ນຳໃຊ້ທີ່ດິນ ທີ່ແຂວງໄດ້ກຳນົດ;

6. ເປັນຜູ້ທີ່ມີປະຫວັດ ແລະ ການເຄື່ອນໄຫວທີ່ຈະແຈ້ງ;

7. ກຳນົດເວລານຳໃຊ້ທີ່ດິນນັ້ນສູງສຸດບໍ່ເກີນສິບຫ້າປີ ແລະ ສາມາດຕໍ່ໄດ້ໜຶ່ງຄັ້ງແຕ່ບໍ່ເກີນສິບຫ້າປີ ຫຼື ປະຕິບັດຕາມສັນຍາລະຫວ່າງຜູ້ລົງທຶນ ແລະ ເຈົ້າຂອງເນື້ອທີ່ດິນ;

8. ມີເງື່ອນໄຂອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 17 (ປັບປຸງ) ຄຳຮ້ອງ ແລະ ເອກະສານການປະກອບຂໍລົງທຶນ**

1. ການຍື່ນຄຳຮ້ອງຂໍລົງທຶນ: ຜູ້ລົງທຶນຕ້ອງຍື່ນຄຳຮ້ອງຂໍລົງທຶນ ທີ່ຫ້ອງການບໍລິການເອກະສານຜ່ານປະຕູດຽວ ຂັ້ນແຂວງ ເພື່ອສະເໜີຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ;

2. ເອກກະສານປະກອບຂໍລົງທຶນຕ້ອງເປັນພາສາລາວ ເພື່ອອຳນວຍຄວາມສະດວກໃຫ້ແກ່ການພິຈາລະນາ ຊຶ່ງປະກອບມີດັ່ງນີ້:

1). ຄຳຮ້ອງຂໍລົງທຶນດ້ານກະສິກຳຕາມຮູບແບບສັນຍາຕາມແບບພິມທີ່ກຳນົດ; ຊຶ່ງຄຳຮ້ອງດັ່ງກ່າວຕ້ອງໄດ້ຮັບການຢັ້ງຢືນເຫັນດີຈາກນາຍບ້ານ, ຫົວໜ້າຫ້ອງການແຜນການ ແລະ ການລົງທຶນເມືອງ ແລະ ເຊັນຢັ້ງຢືນຈາກທ່ານເຈົ້າເມືອງ;

2).ເອກະສານຢັ້ງຢືນກ່ຽວກັບທີ່ດິນຂອງປະຊາຊົນ ທີ່ຈະເຂົ້າຮ່ວມໂຄງການ ໂດຍຮັບຮູ້ຈາກອົງການປົກຄອງບ້ານ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ແລະ ຢັ້ງຢືນຈາກທ່ານເຈົ້າເມືອງ, ທີ່ດິນແຕ່ລະຕອນ ຂອງປະຊາຊົນ ຕ້ອງມີເອກະສານຢັ້ງຢືນ ສິດນຳໃຊ້ຖືກຕ້ອງຕາມກົດໝາຍ-ລະບຽບການ;

3. ສຳເນົາເອກະສານຕ່າງໆ ທີ່ກ່ຽວຂ້ອງກັບການອະນຸຍາດລົງທຶນຢູ່ ສປປ ລາວ ເຊັ່ນ:

(1) ສຳເນົາໃບທະບຽນວິສາຫະກິດໃຫ້ຖືກຕ້ອງຕາມຮູບແບບສັນຍາ ແລະ ໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດເຊັ່ນ: ປະເພດ, ຮູບການ ແລະ ຮູບແບບ ວິສາຫະກິດ;

(2) ສຳເນົາໃບທະບຽນອາກອນ;

(3) ສຳເນົາໃບອະນຸຍາດດຳເນີນທຸລະກິດຂອງຂະແໜງການ;

(4) ບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນດຳເນີນງານ;

(5) ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ;

(6) ໃບຢັ້ງຢືນຖານະການເງິນ ຈາກສະຖາບັນການເງິນ ຫຼື ທະນາຄານທີ່ຕັ້ງຢູ່ ສປປ ລາວ.

**ມາດຕາ 18 (ປັບປຸງ) ຂັ້ນຕອນການພິຈາລະນາ**

ຂັ້ນຕອນ ແລະ ການກຳນົດເວລາໃນການພິຈາລະນາກ່ຽວກັບການລົງທຶນ:

ກ. ກໍລະນີນຳໃຊ້ເນື້ອທີ່ຫຼາຍກວ່າ 10 ເຮັກຕາຂຶ້ນໄປ

1. ຫ້ອງການບໍລິການເອກະສານຜ່ານປະຕູດຽວ ຕ້ອງສົ່ງເອກະສານຄຳຮ້ອງຂໍຄຳເຫັນນຳຂະແໜງການກ່ຽວຂ້ອງ ພາຍໃນ 2 ວັນລັດຖະການ ເພື່ອຄົ້ນຄ້ວາ ແລະ ມີຄຳເຫັນແຈ້ງຕອບເປັນລາຍລັກອັກສອນພາຍໃນເວລາບໍ່ເກີນ 8 ວັນລັດຖະການ ນັບແຕ່ໄດ້ຮັບເອກະສານຄຳຮ້ອງເປັນຕົ້ນໄປ;

2. ພາຍຫຼັງມີຄຳເຫັນຈາກຂະແໜງການກ່ຽວຂ້ອງແລ້ວ ຫ້ອງການບໍລິການເອກະສານຜ່ານປະຕູດຽວ ຕ້ອງຄົ້ນຄວ້ານຳສະເໜີຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາພາຍໃນກຳນົດ 10 ວັນລັດຖະການ;

3. ພາຍຫຼັງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນໄດ້ຕົກລົງດ້ານຫຼັກການແລ້ວ ຫ້ອງການບໍລິການເອກະສານຜ່ານປະຕູດຽວ ມອບຮ່າງບົດບັນທຶກຄຸ້ມຄອງໂຄງການ ແລະ ຮ່າງສັນຍາກັບເຈົ້າ

ຂອງດິນ ເພື່ອໃຫ້ຜູ້ລົງທຶນພິຈາລະນາ ແລະ ປຶກສາກັນ. ເມື່ອຜູ້ລົງທຶນສາມາດຕົກລົງເງື່ອນໄຂ ແລະ ເຊັນບົດບັນທຶກຄຸ້ມຄອງ ໂຄງການຮ່ວມກັບຂະແໜງແຜນການ ແລະ ການລົງທຶນແລ້ວ ແລະ ເຊັນສັນຍາກັບເຈົ້າຂອງດິນ, ຂະແໜງແຜນການ ແລະ ການລົງທຶນ ຈຶ່ງຈະອອກໃບອະນຸຍາດລົງທຶນ ແລະ ຂະແໜງອຸດສາຫະກໍາ ແລະ ການຄ້າອອກທະບຽນວິສາຫະກິດໃຫ້ພາຍໃນຢ່າງຊ້າບໍ່ໃຫ້ເກີນ 5 ວັນລັດຖະການ ນັບແຕ່ວັນໄດ້ຮັບອະນຸຍາດການລົງທຶນເປັນຕົ້ນໄປ ທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

4. ຫຼັງຈາກເຊັນບົດບັນທຶກຄຸ້ມຄອງໂຄງການ ຜູ້ລົງທຶນຕ້ອງວາງເງິນຄໍ້າປະກັນຟື້ນຟູດິນຕາມທີ່ລະບຸໄວ້ໃນບົດບັນທຶກຄຸ້ມຄອງໂຄງການ ແລະ ຜູ້ລົງທຶນຍັງຕ້ອງນໍາເອົາບົດບັນທຶກຄຸ້ມຄອງໂຄງການ ແລະ ສັນຍາກັບເຈົ້າຂອງດິນໄປແຈ້ງຕໍ່ ພະແນກການເງິນແຂວງ ບ່ອນກິດຈະການຕັ້ງຢູ່ເພື່ອຊາບ. ຜູ້ລົງທຶນສາມາດຖອນເງິນຄໍ້າປະກັນດັ່ງກ່າວໄດ້ ເມື່ອໄດ້ເຮັດສໍາເລັດດ້ານຟື້ນຟູດິນຄືນ ໂດຍມີການຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ.

ຂ. ກໍລະນີນໍາໃຊ້ດິນແຕ່ 10 ເຮັກຕາລົງມາ

1. ຜູ້ລົງທຶນຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ນໍາຂະແໜງການອຸດສາຫະກໍາ ແລະ ການຄ້າ ເພື່ອສ້າງຕັ້ງເປັນນິຕິບຸກຄົນ;

2. ຫຼັງຈາກໄດ້ຮັບໃບທະບຽນວິສາຫະກິດແລ້ວ ຂະແໜງການກະສິກໍາ ແລະ ປ່າໄມ້ມອບຮ່າງບົດບັນທຶກຄຸ້ມຄອງໂຄງການ ແລະ ຮ່າງສັນຍາກັບເຈົ້າຂອງດິນ ເພື່ອໃຫ້ຜູ້ລົງທຶນພິຈາລະນາ ແລະ ປຶກສາຫາລືກັບເຈົ້າຂອງດິນ, ເມື່ອຜູ້ລົງທຶນສາມາດ ຕົກລົງຮັບເອົາເງື່ອນໄຂ ແລະ ເຊັນບົດບັນທຶກຄຸ້ມຄອງໂຄງການຮ່ວມກັບຂະແໜງການກະສິກໍາ ແລະ ປ່າໄມ້ແລ້ວ ແລະ ເຊັນສັນຍາກັບເຈົ້າຂອງທີ່ດິນ ແລະ ນໍາເອົາສັນຍາກັບເຈົ້າຂອງເນື້ອທີ່ດິນ ຫຼັງຈາກນັ້ນຂະແໜງການກະສິກໍາ ແລະ ປ່າໄມ້ ຈຶ່ງອອກໃບອະນຸຍາດດໍາເນີນກິດຈະການ;

3. ຫຼັງຈາກເຊັນສັນຍາກັບເຈົ້າຂອງເນື້ອທີ່ດິນ ຜູ້ລົງທຶນຕ້ອງວາງເງິນຄໍ້າປະກັນ ເພື່ອຟື້ນຟູດິນຕາມທີ່ລະບຸໄວ້ໃນສັນຍາກັບເຈົ້າຂອງເນື້ອທີ່ດິນ ແລະ ນໍາເອົາສັນຍາໄປແຈ້ງຕໍ່ຫ້ອງການ ການເງິນເມືອງ ບ່ອນກິດຈະການຕັ້ງຢູ່ເພື່ອຮັບຊາບ, ຜູ້ລົງທຶນສາມາດຖອນເງິນຄໍ້າປະກັນດັ່ງກ່າວໄດ້ ເມື່ອໄດ້ເຮັດສໍາເລັດການຟື້ນຟູທີ່ດິນຄືນ ໂດຍມີການຮັບຮອງຈາກຂະແໜງການກະສິກໍາ ແລະ ປ່າໄມ້.

**ມາດຕາ 19 (ປັບປຸງ) ການວາງເງິນຄໍ້າປະກັນສໍາລັບການຟື້ນຟູເນື້ອທີ່ດິນໃຫ້ກັບຄືນສູ່ສະພາບເດີມ**

ຜູ້ລົງທຶນດໍາເນີນກິດຈະການປູກພືດກະສິກໍາ ທີ່ນໍາໃຊ້ທີ່ດິນຂອງພົນລະເມືອງລາວ ຈະຕ້ອງໄດ້ວາງເງິນຄໍ້າປະກັນ ສໍາລັບການຟື້ນຟູເນື້ອທີ່ດິນ ໃຫ້ກັບຄືນສູ່ສະພາບເດີມ ຕາມແຕ່ລະປະເພດພືດ ດັ່ງນີ້:

- ສໍາລັບການປູກພືດກະສິກໍາທີ່ມີອາຍຸເກີນ 1 ປີ, ວາງເງິນຄໍ້າປະກັນສໍາລັບການຟື້ນຟູເນື້ອທີ່ດິນໃຫ້ກັບຄືນສູ່ສະພາບເດີມ ຢ່າງໜ້ອຍບໍ່ຫຼຸດ 750 ໂດລາສະຫະລັດ/1 ເຮັກຕາ, ການວາງເງິນຄໍ້າປະກັນສາມາດແບ່ງເປັນງວດໄດ້ຄື:ງວດທີ່ 1 ຈໍານວນ 30%, ງວດທີ່ 2 ຈໍານວນ 30%, ງວດທີ່ 3 ຈໍານວນ 40% ຂອງຈໍານວນເງິນຄໍ້າປະກັນທັງໝົດ ແລະ ຈໍານວນເງິນ ດັ່ງກ່າວຈະເກັບຮັກສາໄວ້ຢູ່ທະນາຄານໂດຍຕົກລົງກັນລະຫວ່າງ ເຈົ້າຂອງທີ່ດິນ ຜູ້ລົງທຶນ ແລະ ພະແນກແຜນການ ແລະ ການລົງທຶນແຂວງ, ການມອບເງິນຄໍ້າປະກັນແມ່ນພາຍຫຼັງເຊັນສັນຍາ ໂດຍກໍານົດ ຕາມອາຍຸພືດໃຫ້ຜົນຜະລິດພາຍໃນ 1 ປີເຊັ່ນ: ໝາກກ້ວຍ, ໝາກນັດ, ມັນຕົ້ນ, ສາລີ, ອ້ອຍ, ຢາສູບ, ຂີງ, ໝາກໃສ່, ສົ້ມພໍດີ, ພືດຜັກ ແລະ ອື່ນໆ ແມ່ນໃຫ້ວາງເງິນ 30%, ໃນປີທີ່ 2, ວາງເງິນ 30% ໃນປີທີ່ 3 ແລະ ວາງເງິນ 40% ໃນປີທີ່ 4 ແລະ ພືດທີ່ມີອາຍຸໃຫ້ຜົນຜະລິດເກີນ 1 ປີ ເຊັ່ນ: ໝາກຖົ່ວລຽນ, ໝາກກ້ຽງ, ໝາກມ່ວງ, ໄມ້ວິກ, ໄມ້ກະຖິນນະລົງ, ໄມ້ປ່ອງ ແລະ ໄມ້ໃຫ້ໝາກອື່ນໆ ວາງເງິນ 30% ໃນປີທີ່ 6, ວາງເງິນ 30% ໃນປີທີ 12, ວາງເງິນ 40% ໃນປີທີ່ 18;

- ສໍາລັບການປູກພືດລົ້ມລຸກທີ່ມີອາຍຸບໍ່ເກີນ 1 ປີ ໃຫ້ວາງເງິນຄໍ້າປະກັນສໍາລັບການຟື້ນຟູດິນໃຫ້ກັບຄືນສູ່ສະພາບເດີມຢ່າງໜ້ອຍບໍ່ໃຫ້ຫຼຸດ 100 ໂດລາສະຫະລັດ/1ເຮັກຕາ, ການວາງເງິນຄໍ້າປະກັນແມ່ນໃຫ້ວາງເປັນງວດດຽວ;

- ການວາງເງິນຄ້ຳປະກັນຈະໄດ້ເກັບຮັກສາໄວ້ຢູ່ທະນາຄານ ໂດຍການຕົກລົງກັນລະຫວ່າງ ເຈົ້າຂອງທີ່ດິນ, ຜູ້ລົງທຶນ ແລະ ພະແນກແຜນການ ແລະ ການລົງທຶນ (ສຳລັບປູກພືດປະເພດຖົ່ວແມ່ນຍົກເວັ້ນການວາງເງິນຄ້ຳປະກັນຟື້ນຟູເນື້ອທີ່ດິນ);

- ຜູ້ລົງທຶນສາມາດຖອນເງິນຄ້ຳປະກັນຟື້ນຟູເນື້ອທີ່ດິນຄືນ ພ້ອມກັບອັດຕາດອກເບ້ຍເງິນຝາກໄດ້ພາຍຫຼັງທີ່ໄດ້ປັບປຸງເນື້ອທີ່ດິນ ໃຫ້ກັບຄືນສູ່ສະພາບເດີມ (ໂດຍໄດ້ຮັບການຢັ້ງຢືນ ຈາກຂະແໜງການກະສິກຳ ແລະ ປ່າໄມ້), ແຕ່ໃນກໍລະນີຜູ້ລົງທຶນບໍ່ປະຕິບັດພັນທະ ການປັບປຸງເນື້ອທີ່ດິນກັບຄືນສູ່ສະພາບເດີມ ເຈົ້າຂອງເນື້ອທີ່ດິນ, ພະແນກແຜນການ ແລະ ການລົງທຶນ, ພະແນກກະສິກຳ ແລະ ປ່າໄມ້ ຈະດຳເນີນການຍຶດເງິນຄ້ຳປະກັນດັ່ງກ່າວພ້ອມດອກເບ້ຍ ເພື່ອນຳມາຟື້ນຟູເນື້ອທີ່ດິນ ແລະ ສິ່ງແວດລ້ອມໃຫ້ກັບຄືນສູ່ສະພາບເດີມໃຫ້ກັບເຈົ້າຂອງສິດນຳໃຊ້ ເນື້ອທີ່ດິນ;

- ໃນກໍລະນີ ປະຊາຊົນຜະລິດກະສິກຳຢູ່ໃນເນື້ອທີ່ດິນຂອງຕົນເອງ (ຕາມຮູບແບບ 1+4+1) ເພື່ອຂາຍຜົນຜະລິດໃຫ້ໂຄງການ, ບໍລິສັດ ຫຼື ໂຮງງານປຸງແຕ່ງ ບົນພື້ນຖານຂໍ້ຜູກພັນສັນຍາ ຊື້ຂາຍຜົນຜະລິດກະສິກຳຮ່ວມກັນ ກໍລະນີນີ້ຈະບໍ່ໄດ້ວາງເງິນຄ້ຳປະກັນ ເພື່ອນຳມາຟື້ນຟູເນື້ອທີ່ດິນ ແລະ ສິ່ງແວດລ້ອມໃຫ້ກັບຄືນສູ່ສະພາບເດີມ.

## ໝວດທີ 4
## ການຄຸ້ມຄອງການລົງທຶນດ້ານກະສິກຳຕາມຮູບແບບສັນຍາ

### ມາດຕາ 20 (ປັບປຸງ) ການຄຸ້ມຄອງການລົງທຶນດ້ານກະສິກຳ ຕາມຮູບແບບສັນຍາ

1. ການຄຸ້ມຄອງປະຊາຊົນ, ຜູ້ລົງທຶນ;
2. ການຄຸ້ມຄອງທີ່ດິນກະສິກຳ ທີ່ມີໂຄງການລົງທຶນຜະລິດກະສິກຳຕາມມາດຖານກະສິກຳສະອາດເປັນ ສິນຄ້າຕາມຮູບແບບສັນຍາ;
3. ການຄຸ້ມຄອງການນຳໃຊ້ທີ່ດິນສຳລັບການລ້ຽງສັດ;
4. ການຄຸ້ມຄອງປົກປັກຮັກສາສິ່ງແວດລ້ອມ;
5. ການຄຸ້ມຄອງການໃຊ້ແຮງງານ;
6. ການຄຸ້ມຄອງຜົນຜະລິດ;
7. ການຄຸ້ມຄອງຜົນປະໂຫຍດ;
8. ການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ;
9. ການຄຸ້ມຄອງປັດໄຈການຜະລິດ, ສິນຄ້າກະສິກຳ;
10. ການໂຈະ, ຍົກເລີກການລົງທຶນ.

### ມາດຕາ 21 (ປັບປຸງ) ການຄຸ້ມຄອງປະຊາຊົນ, ຜູ້ລົງທຶນ

ລັດເຮັດໜ້າທີ່ຄຸ້ມຄອງປະຊາຊົນ, ຜູ້ລົງທຶນດ້ານກະສິກຳຕາມຮູບແບບສັນຍາ ຢູ່ພາຍໃນແຂວງບໍລິຄຳໄຊຢ່າງເປັນລະບົບລວມສູນ ແລະ ເປັນເອກະພາບ, ບໍ່ອະນຸຍາດໃຫ້ປະຊາຊົນ, ຜູ້ລົງທຶນໃດໜຶ່ງເຄື່ອນໄຫວໂດຍບໍ່ໄດ້ຮັບອະນຸຍາດ ແລະ ບໍ່ຖືກຕ້ອງຕາມກົດໝາຍ, ລະບຽບການ.

### ມາດຕາ 22 (ປັບປຸງ) ການຄຸ້ມຄອງທີ່ດິນກະສິກຳ ທີ່ມີໂຄງການລົງທຶນຜະລິດກະສິກຳສະອາດເປັນສິນຄ້າຕາມຮູບແບບສັນຍາ

ຜູ້ທີ່ລົງທຶນໃນໂຄງການຜະລິດກະສິກຳສະອາດເປັນສິນຄ້າ ຕາມຮູບແບບສັນຍາ ສາມາດລົງທຶນໄດ້ນຳເຈົ້າຂອງຜູ້ຖືສິດນຳໃຊ້ທີ່ດິນ ແລະ ເນື້ອທີ່ດິນລັດຈັດສັນໃຫ້ເທົ່ານັ້ນ.

**ມາດຕາ 23 ການຄຸ້ມຄອງການນຳໃຊ້ທີ່ດິນສຳລັບລ້ຽງສັດ**

ການຄຸ້ມຄອງການນຳໃຊ້ທີ່ດິນສຳລັບລ້ຽງສັດ ແມ່ນການກຳນົດເຂດ ແລະ ວາງນະໂຍບາຍກ່ຽວກັບການນຳໃຊ້ພື້ນທີ່ດິນ ທີ່ເໝາະສົມສຳລັບການລ້ຽງສັດແຕ່ລະປະເພດ ລວມທັງການກຳນົດທິດພັດທະນາ ແລະ ວາງລະບຽບການຄຸ້ມຄອງເຂດລ້ຽງສັດໃນເຂດສະຫງວນໄວ້ ເພື່ອການປູກພືດວັດຖຸດິບອາຫານສັດ.

**ມາດຕາ 24 (ປັບປຸງ) ການຄຸ້ມຄອງການປົກປັກຮັກສາສິ່ງແວດລ້ອມ**

1. ປ້ອງກັນ, ປົກປັກຮັກສາ ແລະ ຟື້ນຟູສິ່ງແວດລ້ອມ ຕາມທີ່ລະບຸໄວ້ໃນສັນຍາ ແລະ ນິຕິກຳທີ່ກ່ຽວຂ້ອງ;

2. ໃນກໍລະນີເກີດມີຜົນກະທົບທາງລົບ ທີ່ເກີດຈາກໂຄງການ ການລົງທຶນຂອງຕົນ ໂດຍອີງໃສ່ນິຕິກຳທີ່ກ່ຽວຂ້ອງ ແລະ ສົມທົບກັບພາກສ່ວນຕ່າງໆ ໃນການແກ້ໄຂບັນຫາດ້ານສິ່ງແວດລ້ອມ-ສັງຄົມຕ້ອງໄດ້ຊົດເຊີຍຄ່າເສຍຫາຍ ປັບປຸງດິນ ແລະ ສະພາບແວດລ້ອມໃຫ້ຢູ່ໃນສະພາບປົກກະຕິ;

3. ການນຳໃຊ້ສານເຄມີ ຕ້ອງບໍ່ໃຫ້ເກີນຄ່າມາດຕະຖານການຜະລິດກະສິກຳສະອາດ ແລະ ສານເຄມີຕ້ອງຫ້າມ ທີ່ລັດຖະບານກຳນົດໄວ້, ສານເຄມີທີ່ໝົດອາຍຸ ລວມເຖິງສິ່ງປົນເປື້ອນຕ່າງໆ, ຕ້ອງມີແຜນຈັດສົນສະຖານທີ່ເກັບຮັກສາ ຢ່າງຖືກຕ້ອງຕາມລະບຽບການກ່ຽວຂ້ອງກຳນົດ;

4. ການໝູນໃຊ້ຄືນສິ່ງເສດເຫຼືອທີ່ສາມາດໃຊ້ຄືນໄດ້, ໃນກໍລະນີທີ່ນຳໃຊ້ຝຸ່ນຊີວະພາບ ຕ້ອງຜ່ານຂະບວນການຕາມຫຼັກວິຊາການ ເພື່ອບໍ່ໃຫ້ນຳພະຍາດມາສູ່ຄົນ;

5. ການເກັບມ້ຽນສານເຄມີ, ສິ່ງເສດເຫຼືອຈາກການນຳໃຊ້ກ່ອນການທຳລາຍຕ້ອງປະຕິບັດຕາມຂັ້ນຕອນໃຫ້ຖືກຕ້ອງ ກັບແຜນການຄຸ້ມຄອງສິ່ງເສດເຫຼືອ ທີ່ກຳນົດຢູ່ໃນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມທີ່ຖືກຮັບຮອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບທີ່ກຳນົດໄວ້;

6. ສຳລັບສິນຄ້າທີ່ບໍ່ຜ່ານມາດຕະຖານການຜະລິດ ກະສິກຳສະອາດ (ກະສິກຳທີ່ດີ " GAP "Good Agriculture Practice ,ກະສິກຳອິນຊີ " OA " Organic Agriculture ) ແມ່ນໃຫ້ປະຕິບັດຕາມລະບຽບການຂອງພະແນກການກ່ຽວຂ້ອງ.

**ມາດຕາ 25 (ປັບປຸງ) ການຄຸ້ມຄອງການໃຊ້ແຮງງານ**

ທຸກຫົວໜ່ວຍທຸລະກິດ ຕ້ອງເຮັດສັນຍາແຮງງານກັບຜູ້ອອກແຮງງານ ຊຶ່ງແມ່ນການຕົກລົງ ລະຫວ່າງຜູ້ອອກແຮງງານ ກັບຜູ້ໃຊ້ແຮງງານ ຫຼື ລະຫວ່າງ ອົງການກຳມະບານ ກັບຜູ້ຕາງໜ້າຜູ້ໃຊ້ແຮງງານ ກ່ຽວກັບເງື່ອນໄຂການເຮັດວຽກ, ເງິນເດືອນ ຫຼື ຄ່າແຮງງານ, ສະຫວັດດີການ, ເຄື່ອງ-ອຸປະກອນປ້ອງກັນແຮງງານ ແລະ ນະໂຍບາຍອື່ນໆ. ສັນຍາແຮງງານ ຕ້ອງສ້າງຂຶ້ນບົນພື້ນຖານຫຼັກການສະເໝີພາບ ແລະ ເຫັນດີເຫັນພ້ອມນຳກັນ ລະຫວ່າງ ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ;

ສັນຍາແຮງງານຕ້ອງປະກອບມີເນື້ອໃນຕົ້ນຕໍດັ່ງນີ້: 1) ຊື່ ແລະ ນາມສະກຸນຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ; 2) ຂະແໜງວຽກງານສິດ, ພັນທະ, ຄວາມຮັບຜິດຊອບ ແລະ ໜ້າທີ່ວິຊາສະເພາະຂອງຜູ້ອອກແຮງງານ; 3) ເງິນເດືອນ ຫຼື ຄ່າແຮງງານຂອງຜູ້ອອກແຮງງານ; 4) ກຳນົດເວລາຂອງສັນຍາແຮງງານ (ວັນ ເດືອນ, ປີເລີ່ມຕົ້ນ ແລະ ສິ້ນສຸດຂອງສັນຍາ); 5) ບ່ອນຢູ່ປັດຈຸບັນຂອງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ; 6) ຮູບການເບີກຈ່າຍເງິນເດືອນ ແລະ ຄ່າແຮງງານ; 7) ກຳນົດເວລາກວດສອບຄວາມສາມາດຂອງຜູ້ອອກແຮງງານ; 8) ສະຫວັດດີການ ແລະ ນະໂຍບາຍອື່ນໆຂອງຜູ້ອອກແຮງງານ; 9) ວັນເຮັດວຽກ, ວັນພັກຜ່ອນ ແລະ ວັນພັກ; 10) ຜົນປະໂຫຍດທີ່ຜູ້ອອກແຮງງານຈະໄດ້ຮັບຫຼັງຈາກສິ້ນສຸດສັນຍາແຮງງານ; 11) ບັນຫາອື່ນທີ່ເຫັນວ່າທັງສອງຝ່າຍຈຳເປັນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍແຮງງານ ແລະ ລະບຽບການ ທີ່ກ່ຽວຂ້ອງ;

ຜູ້ໃຊ້ແຮງງານ ຕ້ອງຈັດໃຫ້ຜູ້ອອກແຮງງານ ໄດ້ຮັບການກວດສຸຂະພາບ ຢ່າງໜ້ອຍສອງຄັ້ງຕໍ່ປີ, ກວດສຸຂະພາບກ່ອນເຂົ້າເຮັດວຽກ ແລະ ກວດສຸຂະພາບກ່ອນການອອກເຮັດວຽກ. ສຳລັບຜູ້ອອກແຮງງານທີ່ເຮັດວຽກກ່ຽວກັບຄວາມສ່ຽງ ແລະ ອາດເປັນອັນຕະລາຍຕໍ່ສຸຂະພາບ ແລະ/ຫຼື ເຮັດວຽກກາງຄືນ ຕ້ອງໄດ້ຮັບການກວດສຸຂະພາບຢ່າງໜ້ອຍສາມຄັ້ງຕໍ່ປີ.

**ມາດຕາ 26 (ປັບປຸງ) ການຄຸ້ມຄອງຜົນຜະລິດ**

1. ຕ້ອງປະຕິບັດຕາມມາດຕະຖານກະສິກໍາສະອາດ (ກະສິກໍາທີ່ດີ " GAP " Good Agriculture Practice, ກະສິກໍາອິນຊີ " OA " Organic Agriculture ) ຕາມນິຕິກໍາຂອງກົມປູກຝັງ, ກະຊວງກະສິກໍາ ແລະ ປ່າໄມ້;

2. ຮັບປະກັນຜົນຜະລິດເພື່ອເປັນສິນຄ້າ ໃນການຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງຕະຫຼາດແຕ່ລະໄລຍະ;

3. ການເຄື່ອນຍ້າຍຜົນຜະລິດກະສິກໍາເພື່ອການສົ່ງອອກໄປຕ່າງປະເທດ ຕ້ອງມີໃບຢັ້ງຢືນສຸຂານາໄມພືດ ແລະ ໃບຢັ້ງຢືນສຸຂະພາບສັດ ຈາກພະແນກກະສິກໍາ ແລະ ປ່າໄມ້ ແຂວງບໍລິຄໍາໄຊ.

**ມາດຕາ 27 (ປັບປຸງ) ການຄຸ້ມຄອງຜົນປະໂຫຍດ**

**1. ຜົນປະໂຫຍດຂອງລັດ**

- ລັດຈະໄດ້ຮັບຈາກການເກັບພາສີ-ອາກອນ, ຄ່າທໍານຽມ, ພັນທະຕ່າງໆ ຕາມກົດໝາຍ, ນິຕິກໍາລຸ່ມກົດໝາຍທີ່ກໍານົດ ແຕ່ລະໄລຍະເຂົ້າງົບປະມານແຫ່ງລັດ;
- ສ້າງວຽກເຮັດງານທໍາ, ລຸດຜ່ອນການເຄື່ອນຍ້າຍແຮງງານທ້ອງຖິ່ນອອກໄປເຮັດວຽກຢູ່ແຂວງອື່ນ ແລະ ຕ່າງປະເທດ;
- ເກີດມີຂະບວນການຜະລິດເປັນສິນຄ້າ;
- ພື້ນຖານໂຄງລ່າງຈໍານວນໜຶ່ງໄດ້ຮັບການພັດທະນາເປັນຕົ້ນ: ເສັ້ນທາງ, ໄຟຟ້າ.

**2. ຜົນປະໂຫຍດຂອງປະຊາຊົນ**

- ເພື່ອຮັບປະກັນຜົນປະໂຫຍດຂອງຜູ້ຮ່ວມລົງທຶນ ເປັນຕົ້ນປະຊາຊົນ ທີ່ນໍາເອົາເນື້ອທີ່ດິນຂອງຕົນເຂົ້າຮ່ວມ ໂຄງການ ຕາມຮູບແບບສັນຍານັ້ນ ຜູ້ລົງທຶນຕ້ອງກໍານົດເງື່ອນໄຂຜົນຕອບແທນດ້ານເສດຖະກິດ (ລາຍຮັບ) ຕໍ່ປະຊາຊົນຢ່າງເປັນລາຍລັກອັກສອນ (ມີສັນຍາລະຫວ່າງປະຊາຊົນ ແລະ ຜູ້ລົງທຶນ) ບົນພື້ນຖານການຕົກລົງເຫັນດີນໍາກັນ ລະຫວ່າງ ປະຊາຊົນ ແລະ ຜູ້ລົງທຶນ ແລະ ເຊັນຢັ້ງຢືນຈາກອົງການປົກຄອງບ້ານ, ຂະແໜງການກ່ຽວຂ້ອງ ແລະ ນໍາໄປຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານ;
- ຈະໄດ້ຮັບການຝຶກອົບຮົມ, ຮຽນຮູ້ກ່ຽວກັບເຕັກນິກ-ວິຊາການ ກ່ຽວກັບການປູກ, ການລ້ຽງ, ການບົວລະບັດຮັກສາ ແລະ ສາມາດເອົາຄວາມຮູ້ຈາກໂຄງການ ແລະ ຮັບຮູ້ດ້ານຂໍ້ມູນຂ່າວສານກ່ຽວກັບການລົງທຶນ ໄປນໍາໃຊ້ເຂົ້າໃນການຜະລິດ ພາຍໃນຄອບຄົວ;
- ມີວຽກເຮັດງານທໍາ ແລະ ມີລາຍຮັບຈາກການອອກແຮງງານ;
- ມີລາຍຮັບຈາກການເຊົ່າທີ່ດິນ.

**3. ຜົນປະໂຫຍດຂອງຜູ້ລົງທຶນ**

- ມີຜົນປະໂຫຍດໂດຍການຂາຍຜົນຜະລິດທີ່ໄດ້ຈາກການລົງທຶນຂອງຕົນຮ່ວມກັບປະຊາຊົນ;
- ໄດ້ມີການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນບ່ອນທີ່ຕົນເອງໄດ້ລົງທຶນ ແລະ ອື່ນໆ.

**ມາດຕາ 28 ການຄຸ້ມຄອງນໍ້າ ແລະ ຊັບພະຍາກອນນໍ້າ**

ການຄຸ້ມຄອງນໍ້າ ແລະ ຊັບພະຍາກອນນໍ້າ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ຮັບປະກັນການຄຸ້ມຄອງ, ການນໍາໃຊ້ນໍ້າ, ການອະນຸລັກ ແລະ ປົກປ້ອງຮັກສານໍ້າ, ຊັບພະຍາກອນນໍ້າ, ສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ;

2. ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຍຸດທະສາດການຄຸ້ມຄອງ, ການບໍລິການ ແລະ ການນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າ, ແຜນຄຸ້ມຄອງນໍ້າ ແລະ ຊັບພະຍາກອນນໍ້າ, ການປະເມີນສິ່ງແວດລ້ອມແບບຍຸດທະສາດ, ການຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ ແລະ ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;

3. ຖືເອົາຄຸນນະພາບນໍ້າ ແລະ ຊັບພະຍາກອນນໍ້າເປັນຕົ້ນຕໍພ້ອມເອົາການບູລະນະຟື້ນຟູນໍ້າ ແລະ ຊັບ

ພະຍາກອນນ້ຳເປັນສຳຄັນ;

4. ຮັບປະກັນມີສ່ວນຮ່ວມຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງໃນການວາງແຜນ, ພັດທະນາ, ການນຳໃຊ້ນ້ຳ ແລະ ປົກປັກຮັກສາຊັບພະຍາກອນນ້ຳໃຫ້ຍືນຍົງ;

5. ຮັບຜິດຊອບຕໍ່ຄວາມເສຍຫາຍນ້ຳ ແລະ ຊັບພະຍາກອນນ້ຳໃນເຂດການຜະລິດທາງດ້ານຄຸນນະພາບ ແລະ ປະລິມານ.

**ມາດຕາ 29 (ໃໝ່) ການຄຸ້ມຄອງປັດໄຈການຜະລິດ, ສິນຄ້າກະສິກຳ**

ການຄຸ້ມຄອງປັດໄຈການຜະລິດ, ສິນຄ້າກະສິກຳ ໃຫ້ປະຕິບັດດັ່ງນີ້:

1. ຜູ້ນຳເຂົ້າປັດໄຈການຜະລິດ ຕ້ອງປະຕິບັດຕາມບົດວິພາກເສດຖະກິດເຕັກນິກ, ແຜນນຳເຂົ້າປະຈຳປີ, ໄດ້ຮັບອານຸຍາດນຳເຂົ້າ ຈາກຂະແໜງການກ່ຽວຂ້ອງ ແລະ ການນຳໃຊ້ປັດໄຈການຜະລິດ ໃຫ້ຖືກຕ້ອງຕາມເຕັກນິກວິຊາການ, ລະບຽບການ ແລະ ກົດໝາຍກຳນົດ;

2. ຜູ້ຜະລິດກະສິກຳ ຕ້ອງຮັບປະກັນການຜະລິດ ມີຄຸນນະພາບດີ, ໄດ້ມາດຕະຖານ, ລາຄາທີ່ເປັນທຳ ແລະ ການບໍລິການທີ່ດີ, ຕ້ອງປະຕິບັດຕາມສັນຍາ, ຫ້າມຂາຍຜົນຜະລິດໃຫ້ຄົນອື່ນເດັດຂາດ, ຍົກເວັ້ນໄດ້ຮັບການເຫັນດີຈາກຄູ່ສັນຍາ;

3. ຜູ້ຊື້ ຕ້ອງເກັບຊື້ຜົນຜະລິດກະສິກຳ ຕາມລາຄາທີ່ໄດ້ເຊັນສັນຍາຕົກລົງກັນໄວ້, ຫ້າມບໍ່ໃຫ້ເອົາປຽບຜູ້ຜະລິດ ເຊັ່ນ: ຕີເກດຜົນຜະລິດຕ່ຳ.

**ມາດຕາ 30 (ໃໝ່) ການໂຈະ, ການຍົກເລີກການລົງທຶນ**

1. ການໂຈະການລົງທຶນ: ການລົງທຶນ ຈະຖືກໂຈະການເຄື່ອນໄຫວຊົ່ວຄາວໂດຍອີງການທີ່ອະນຸຍາດລົງທຶນ ແລະ ອອກທະບຽນວິສາຫະກິດ (ມາດຕາ 85 ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14 /ສພຊ, ລົງວັນທີ 17 ພະຈິກ 2016) ດັ່ງນີ້:

- ຕາມການສະເໜີຂອງຜູ້ລົງທຶນ;
- ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ ຍ້ອນບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດຳເນີນທຸລະກິດບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

2. ການຍົກເລີກການລົງທຶນ: ການລົງທຶນຈະຖືກຍົກເລີກ (ມາດຕາ 87 ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14 /ສພຊ, ລົງວັນທີ 17 ພະຈິກ 2016) ໃນກໍລະນີດັ່ງນີ້:

- ຕາມການສະເໜີຂອງຜູ້ລົງທຶນ ຫຼື ຄູ່ສັນຍາຝ່າຍໃດຝ່າຍໜຶ່ງ ໃນກໍລະນີທີ່ມີການລະເມີດຂໍ້ຜູກພັນຂອງອີກຝ່າຍໃດຝ່າຍໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ ຫຼື ກົດໝາຍ ແລະ ລະບຽບການ;
- ບໍ່ເສຍພັນທະພາສີ, ອາກອນ ແລະ ພັນທະການເງິນອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
- ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ ໃຫ້ຍົກເລີກການລົງທຶນ;
- ມີການລົ້ມລະລາຍ ຕາມກົດໝາຍ;

ໃນກໍລະນີມີການຍົກເລີກການລົງທຶນ ຈະບໍ່ພາໃຫ້ຜູ້ລົງທຶນພົ້ນຈາກພັນທະ ແລະ ໜີ້ສິນທີ່ມີຕໍ່ບຸກຄົນ, ນິຕິບຸກຄົນ ແລະ ຕໍ່ລັດ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 31 ຂໍ້ຫ້າມສຳລັບພະນັກງານ**

1. ສວຍໃຊ້ອຳນາດ, ໜ້າທີ່ຕຳແໜ່ງ ແລະ ຮັບສິນບົນ ຈາກຜູ້ລົງທຶນເພື່ອຜົນປະໂຫຍດສ່ວນຕົວ;

2. ສົມຮູ້ຮ່ວມຄິດ ຫຼື ເອື້ອອຳນວຍຄວາມສະດວກໃຫ້ຜູ້ລົງທຶນ ເພື່ອໄດ້ມາຊຶ່ງຜົນປະໂຫຍດທີ່ຂັດຕໍ່ກົດໝາຍ ແລະ ລະບຽບການ;

3. ເມີນເສີຍ, ປະລະໜ້າທີ່ຕໍ່ຄວາມຮັບຜິດຊອບຂອງຕົນທີ່ກໍ່ຄວາມເສຍຫາຍຕໍ່ກັບຜົນປະໂຫຍດຂອງລັດ, ປະຊາຊົນ ແລະ ຜູ້ລົງທຶນ;

4. ກົດໜ່ວງ, ຖ່ວງດຶງ ຫຼື ແກ່ຍາວເວລາ ການພິຈາລະນາເອກະສານຕ່າງໆ ຂອງຜູ້ລົງທຶນໂດຍບໍ່ມີເຫດຜົນ;

5. ປົກປ້ອງ ຫຼື ສົມຮູ້ຮ່ວມຄິດກັບຜູ້ລົງທຶນທີ່ລະເມີດຕໍ່ລະບຽບກົດໝາຍຊຶ່ງສ້າງຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ.

**ມາດຕາ 32 (ປັບປຸງ) ຂໍ້ຫ້າມສຳລັບຜູ້ລົງທຶນ**

1. ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານຮັບຜິດຊອບວຽກງານທີ່ກ່ຽວຂ້ອງ;
2. ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ ແລະ ພະນັກງານລັດ ເພື່ອໃຫ້ໄດ້ມາຊຶ່ງຜົນປະໂຫຍດ ທີ່ຄັດກັບກົດໝາຍ ແລະ ລະບຽບການ;
3. ຫຼົບຫຼີກການປະຕິບັດພັນທະ, ເຊື່ອງອຳ, ປົດບັງລາຍຮັບ, ກຳໄລ ແລະ ຊຸກເຊື່ອງການກະທຳຜິດທີ່ຕິດພັນກັບການເສຍພາສີ, ອາກອນຕ່າງໆ;
4. ນຳໃຊ້ແຮງງານເກີນກົດໝາຍແຮງງານກຳນົດໄວ້;
5. ບຸກເບີກເນື້ອທີ່ດິນເກີນຂອບເຂດທີ່ລັດອະນຸຍາດ;
6. ກະທຳຜິດຕໍ່ຂໍ້ຕົກລົງສະບັບນີ້ ແລະ ກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 33 (ປັບປຸງ) ຂໍ້ຫ້າມຂອງປະຊາຊົນ**

1. ປອມແປງເອກະສານ, ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງກ່ຽວກັບສິດນຳໃຊ້ທີ່ດິນ;
2. ສົມທົບກັບນັກລົງທຶນເພື່ອຊຸກເຊື່ອງ ຫລື ສ້າງເງື່ອນໄຂປົດບັງຂໍ້ມູນ ເພື່ອສະເໜີການລົງທຶນຕາມຮູບແບບສັນຍາ;
3. ຫ້າມບຸກລຸກຈັບຈອງເນື້ອທີ່ດິນຂອງລັດ ແລະ ເນື້ອທີ່ດິນ 3 ປະເພດປ່າ;
4. ມີພຶດຕິກຳອື່ນໆ ທີ່ຄັດກັບ ຂໍ້ຕົກລົງສະບັບນີ້ ແລະ ກົດໝາຍ.

## ໝວດທີ 6
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 34 ການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນ ສາມາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການແກ້ໄຂດ້ວຍການປານີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ້ງທາງດ້ານເສດຖະກິດ ຢູ່ ສປປ ລາວ;
4. ການແກ້ໄຂດ້ວຍຂະບວນການຍຸດຕິທຳ.

**ມາດຕາ 35 ການແກ້ໄຂດ້ວຍການປານີປະນອມ**

ໃນກໍລະນີ ທີ່ມີຂໍ້ຂັດແຍ່ງກ່ຽວກັບການລົງທຶນ ຄູ່ກໍລະນີຕ້ອງດຳເນີນການແກ້ໄຂຂໍ້ຂັດແຍ່ງນຳກັນໂດຍສັນຕິວິທີ, ປະນີປະນອມກັນ ຫຼື ໂດຍຜ່ານຄົນກາງ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດທີ່ສົມເຫດສົມຜົນ ແລະ ເປັນທຳ.

**ມາດຕາ 36 ການແກ້ໄຂທາງບໍລິຫານ**

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວກັບການລົງທຶນ ຄູ່ກໍລະນີ ຫຼື ຝ່າຍໃດຝ່າຍໜຶ່ງສາມາດສະເໜີຂໍ້ຂັດແຍ່ງຜ່ານຫ້ອງການບໍລິການເອກະສານຜ່ານປະຕູດຽວ ເພື່ອສະເໜີຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາແກ້ໄຂຕາມກົດໝາຍ.

**ມາດຕາ 37 ການແກ້ໄຂ ໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ**

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວກັບການລົງທຶນຄູ່ກໍລະນີ ສາມາດຮ້ອງຂໍຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານ ເສດຖະກິດ ຕາມລະບຽບກົດໝາຍ ຂອງ ສປປ ລາວ.

**ມາດຕາ 38 ການແກ້ໄຂດ້ວຍຂະບວນການຍຸຕິທຳ**

ໃນກໍລະນີ ເກີດມີຂໍ້ຂັດແຍ່ງກ່ຽວກັບການລົງທຶນ ຝ່າຍໃດຝ່າຍໜຶ່ງ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນຕາມກົດໝາຍ ຂອງ ສປປ ລາວ, ເມື່ອມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ໃຫ້ນຳໄປຈັດຕັ້ງປະຕິບັດຕາມຄຳຕັດສິນຢ່າງເຂັ້ມງວດ.

## ໝວດທີ 7
## ຄະນະຄຸ້ມຄອງການລົງທຶນດ້ານກະສິກຳຕາມຮູບແບບສັນຍາ

**ມາດຕາ 39 (ປັບປຸງ) ຄະນະຄຸ້ມຄອງການລົງທຶນດ້ານກະສິກຳຕາມຮູບແບບສັນຍາ**

ອົງການປົກຄອງແຂວງເປັນຜູ້ຊີ້ນຳວຽກງານຄຸ້ມຄອງ ການລົງທຶນດ້ານກະສິກຳຕາມຮູບແບບສັນຍາ ທີ່ມີສ່ວນຮ່ວມກັບປະຊາຊົນ ຢ່າງລວມສູນເປັນເອກະພາບໃນທົ່ວແຂວງ, ໂດຍມອບໃຫ້ພະແນກແຜນການ ແລະ ການລົງທຶນແຂວງ ເປັນຜູ້ຮັບຜິດຊອບໂດຍກົງ ທັງເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນໃຫ້ວຽກງານດັ່ງກ່າວ ມີຜົນສຳເລັດຕາມຈຸດປະສົງ ແລະ ຄາດໝາຍ. ເຊິ່ງປະກອບມີ 11 ພາກສ່ວນຕົ້ນຕໍຄື:

1. ພະແນກແຜນການ ແລະ ການລົງທຶນແຂວງ;
2. ພະແນກກະສິກຳ ແລະ ປ່າໄມ້ແຂວງ;
3. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ;
4. ພະແນກອຸດສາຫະກຳ ແລະ ການຄ້າແຂວງ;
5. ພະແນກການເງິນແຂວງ;
6. ພະແນກສາທາລະນະສຸກແຂວງ;
7. ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ;
8. ສະຫະພັນກຳມະບານແຂວງ;
9. ກອງບັນຊາການ ປກສ ແຂວງ;
10. ທ່ານເຈົ້າເມືອງ 07 ເມືອງ;
11. ບັນດາອົງການປົກຄອງບ້ານ.

**ມາດຕາ 40 (ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກແຜນການ ແລະ ການລົງທຶນແຂວງ**

1. ຮັບຄຳຮ້ອງຂໍລົງທຶນ, ກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເອກະສານຕ່າງໆ;
2. ນຳສົ່ງຄຳຮ້ອງຂໍລົງທຶນ ທັງເປັນໃຈກາງປະສານສົມທົບກັບຂະແໜງການກ່ຽວຂ້ອງ ເພື່ອມີຄຳເຫັນທາງດ້ານວິຊາການ ຕໍ່ບັນດາການສະເໜີຂອງຜູ້ລົງທຶນ;

3. ອອກຈົດໝາຍເຊີນພະແນກການກ່ຽວຂ້ອງ ເຂົ້າຮ່ວມກອງປະຊຸມ ເພື່ອປຶກສາຫາລືດ້ານວິຊາການຕໍ່ການສະເໜີຂອງຜູ້ລົງທຶນ;

4. ສັງລວມຂໍ້ມູນໂຄງການເພື່ອລາຍງານຂໍທິດຊີ້ນຳ ແລະ ຕົກລົງຈາກກອງປະຊຸມຄົບຄະນະ ຄລທ ແຂວງ, ກໍລະນີຮີບດ່ວນ ພະແນກແຜນການ ແລະ ການລົງທຶນສາມາດນຳສະເໜີທ່ານປະທານ ຄລທ ພິຈາລະນາເປັນອັນສະເພາະ;

5. ແຈ້ງຜົນຂອງກອງປະຊຸມຄົບຄະນະ ຄລທ ແຂວງ ແລະ ແຈ້ງຜົນການຕົກລົງຂອງປະທານ ຄລທ ແຂວງໃນໂຄງການ ລົງທຶນດ້ານກະສິກຳຕາມຮູບແບບສັນຍາ ກໍລະນີບໍ່ໄດ້ນຳເຂົ້າໃນວາລະກອງປະຊຸມຄົບຄະນະ ຄທລ ແຂວງໃຫ້ແຈ້ງເຖິງພະແນກການ, ທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ຜູ້ລົງທຶນຮັບຊາບ;

6. ສ້າງບົດບັນທຶກສັນຍາພັດທະນາໂຄງການກັບຜູ້ລົງທຶນ;

7. ຕິດຕາມ, ກວດກາ, ປະເມີນຜົນ ການຈັດຕັ້ງປະຕິບັດໂຄງການ ແລະ ລາຍງານໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

8. ເປັນໃຈກາງສົມທົບກັບພະແນກການກ່ຽວຂ້ອງໃນການຄຸ້ມຄອງ ແລະ ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນ;

9. ຄົ້ນຄວ້າ, ນຳສະເໜີຄຳເຫັນໃນການໂຈະ, ປັບປຸງ ຫຼື ຍົກເລີກໂຄງການທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

10. ຄົ້ນຄວ້າ ແລະ ນຳສະເໜີ ການໃຫ້ນະໂຍບາຍຕ່າງໆຕາມກົດໝາຍ ແລະ ລະບຽບການ;

11. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳກົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 41 (ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ**

1. ສ້າງ ແລະ ຄຸ້ມຄອງແຜນຈັດສັນເນື້ອທີ່ດິນກະສິກຳ, ສຳຫຼວດ ເນື້ອທີ່ດິນກະສິກຳຂອງປະຊາຊົນຜູ້ທີ່ຈະເຂົ້າຮ່ວມໂຄງການລົງທຶນດ້ານກະສິກຳ ຕາມຮູບແບບສັນຍາ ໂດຍສົມທົບກັບພະແນກການກ່ຽວຂ້ອງ ແລະ ທ້ອງຖິ່ນ;

2. ຄຸ້ມຄອງ, ຕິດຕາມ, ກວດກາ, ປະເມີນຜົນ ແລະ ລາຍງານ ການນຳໃຊ້ທີ່ດິນກະສິກຳຂອງປະຊາຊົນໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3. ຄົ້ນຄວ້າ ມີຄຳເຫັນດ້ານວິຊາການ ກ່ຽວກັບການນຳໃຊ້ເນື້ອທີ່ດິນກະສິກຳ ເພື່ອຜະລິດກະສິກຳສະອາດ ແລະ ລ້ຽງສັດເປັນສິນຄ້າ;

4. ຄຸ້ມຄອງການບຸກເບີກເນື້ອທີ່ດິນກະສິກຳ ທີ່ເຂົ້າຮ່ວມໂຄງການ, ແນະນຳ ດ້ານເຕັກນິກວິຊາການກ່ຽວກັບການຜະລິດກະສິກຳສະອາດ ແລະ ລ້ຽງສັດເປັນສິນຄ້າ;

5. ກວດກາ, ຢັ້ງຢືນ ມາດຕະຖານຜົນຜະລິດກະສິກຳສະອາດ ແລະ ຜະລິດຕະພັນສັດ ເປັນສິນຄ້າ;

6. ຄຸ້ມຄອງ, ຄວບຄຸມ ການນຳໃຊ້ປັດໃຈການຜະລິດເຊັ່ນ: ແນວພັດພືດ, ແນວພັນສັດ ຝຸ່ນ, ປຸ໋ຍ, ສານເຄມີ, ຢາປາບສັດຕູພືດ, ທີ່ອາຫານສັດ, ຢາກັນພະຍາດສັດ ແລະ ເຄື່ອງມືອື່ນໆ ທີ່ກ່ຽວຂ້ອງ ໃຫ້ຢູ່ໃນລະບຽບ-ກົດໝາຍກຳນົດ;

7. ອອກອະນຸຍາດດຳເນີນກິດຈະການດ້ານກະສິກຳສະອາດ ແລະ ລ້ຽງສັດ ພ້ອມທັງຂຶ້ນທະບຽນສັດລ້ຽງ (ສັດໃຫຍ່) ໃຫ້ຜູ້ລົງທຶນ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 42 (ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ**

1. ຄຸ້ມຄອງແຜນຈັດສັນທີ່ດິນລວມ, ຄົ້ນຄວ້າ ແລະ ນຳສະເໜີ ການນຳໃຊ້ທີ່ດິນ ໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ມີປະສິດທິຜົນ;

2. ຢັ້ງຢືນຄວາມຖືກຕ້ອງສິດນຳໃຊ້ເນື້ອທີ່ດິນກະສິກຳ ຂອງປະຊາຊົນ ກ່ອນທີ່ຈະເຂົ້າຮ່ວມໂຄງການ;

3. ເປັນເຈົ້າການກວດກາ, ຕິດຕາມ, ປະເມີນຜົນ ແລະ ລາຍງານການນຳໃຊ້ເນື້ອທີ່ດິນກະສິກຳ ຂອງປະຊາຊົນ ທີ່ເຂົ້າຮ່ວມໂຄງການ ແລະ ສົມທົບແກ້ໄຂຂໍ້ຂັດແຍ່ງຕ່າງໆ ທີ່ເກີດຂຶ້ນກັບການນຳໃຊ້ເນື້ອທີ່ດິນ ພາຍໃນໂຄງການ;

4. ປະເມີນ, ຢັ້ງຢືນ ແລະ ຕິດຕາມ, ກວດກາ ຜົນກະທົບ ທາງດ້ານສິ່ງແວດລ້ອມ ຂອງໂຄງການ;

5. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 43 (ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ**

1. ຮັບຄຳຮ້ອງເພື່ອພິຈາລະນາການສະເໜີອອກທະບຽນວິສາຫະກິດ ຂອງຜູ້ລົງທຶນ ໃຫ້ຖືກຕ້ອງຕາມລະບຽບກົດ ໝາຍ ທັງແຈ້ງພາກສ່ວນກ່ຽວຂ້ອງຮັບຊາບ ແລະ ສຳເນົາເອກະສານ;

2. ຄຸ້ມຄອງ, ຕິດຕາມ, ກວດກາ, ປະເມີນຜົນ ແລະ ລາຍງານການນຳໃຊ້ທະບຽນວິສາຫະກິດໃຫ້ຖືກຕ້ອງຕາມລະບຽບ-ກົດໝາຍ;

3. ຄຸ້ມຄອງການນິຕິວິທີ ແລະ ການຈັດຕັ້ງປະຕິບັດໂຄງການນັບແຕ່ຂອດສ້າງຕັ້ງຈົນເຖິງຂອດຍຸບເລີກ ຫຼື ລົ້ມລະລາຍ ຕາມທີ່ກຳນົດໄວ້ໃນກົດໝາຍວິສາຫະກິດ;

4. ຄົ້ນຄວ້າ, ມີຄຳເຫັນດ້ານວິຊາການ ກ່ຽວກັບການອອກອະນຸຍາດທະບຽນວິສາຫະກິດ, ການຄຸ້ມຄອງການປຸງແຕ່ງ ຜະລິດຕະພັນກະສິກຳສະອາດ ເປັນເຄິ່ງສຳເລັດຮູບ ແລະ ສຳເລັດຮູບ ເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກຂາຍຕ່າງປະເທດ;

5. ຄຸ້ມຄອງ, ກວດກາ ການນຳເຂົ້າ ແລະ ສົ່ງອອກ, ການແຈ້ງລາຄາສິນຄ້າ ແລະ ຄຸ້ມຄອງຕະຫຼາດສິນຄ້າກະສິກຳ;

6. ຄຸ້ມຄອງ, ຕິດຕາມ, ກວດກາການດຳເນີນທຸລະກິດ, ການນຳເຂົ້າ, ການນຳໃຊ້ເຄມີ, ການບຳບັດ ແລະ ການກຳຈັດສິ່ງເສດເຫຼືອເຄມີ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 44 (ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກການເງິນແຂວງ**

1. ຄົ້ນຄວ້າ, ມີຄຳເຫັນດ້ານວິຊາການ ໃນວຽກງານການເງິນ ຕໍ່ກັບການລົງທຶນດ້ານກະສິກຳຕາມຮູບແບບສັນຍາ ອອກໃບຢັ້ງຢືນການສຳລະອາກອນປະຈຳປີໃຫ້ແກ່ຜູ້ລົງທຶນ;

2. ເປັນເຈົ້າການຄຸ້ມຄອງ ການຈັດເກັບຄ່າທຳນຽມນຳໃຊ້ທີ່ດິນບຸກຄົນ, ຄຸ້ມຄອງການເກັບອາກອນແຮງງານເງິນເດືອນ ຂອງພະນັກງານຜູ້ລົງທຶນ, ອາກອນກຳໄລ, ອາກອນມູນຄ່າເພີ່ມຈາກການບໍລິການຂົນສົ່ງຂອງບຸກຄົນ ແລະ ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ຕາມລະບຽບການທີ່ກຳນົດໄວ້ແຕ່ລະໄລຍະ ເຂົ້າງົບປະມານຂອງລັດ;

3. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 45 (ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກສາທາລະນະສຸກແຂວງ**

1. ຕິດຕາມ, ກວດກາ, ປະເມີນ ແລະ ລາຍງານການຄຸ້ມຄອງສຸຂະພາບຂອງຜູ້ອອກແຮງງານພາຍໃນບໍລິສັດ ແລະ ຂອບເຂດບ້ານໃກ້ຄຽງໃຫ້ມີສຸຂະພາບແຂງແຮງ;

2. ຕິດຕາມ, ກວດກາ, ຄຸ້ມຄອງຄວາມປອດໄພທາງດ້ານອາຫານຂອງຜູ້ອອກແຮງງານພາຍໃນບໍລິສັດ ແລະ ຂອບເຂດ ບ້ານໃກ້ຄຽງໃຫ້ມີອາຫານທີ່ສະອາດປອດໄພ;

3. ຕິດຕາມ, ກວດກາ, ຄຸ້ມຄອງອານາໄມສາມສະອາດຂອງຜູ້ອອກແຮງງານພາຍໃນບໍລິສັດ ແລະ ຂອບເຂດບ້ານໃກ້ຄຽງ ໃຫ້ມີຄວາມສະອາດງາມຕາ ປະສະຈາກການຖິ້ມ ສິ່ງເສດເຫຼືອ ສະຊາຍ ເຮັດໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 46 (ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ**

1. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄຸ້ມຄອງແຮງງານລາວ, ແຮງງານຕ່າງປະເທດທີ່ເຄື່ອນໄຫວໃນບໍລິສັດ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍແຮງງານ ສະບັບປັບປຸງເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013 ຫຼື ມີການປ່ຽນແປງກົດໝາຍ ໃນແຕ່ລະໄລຍະ;

2. ປະສານສົມທົບກັບບັນດາພະແນກການ, ອົງການຈັດຕັ້ງຕ່າງໆ ໃນການສ້າງ ແລະ ພັດທະນາສີມືແຮງງານການຈັດຫາວຽກເຮັດງານທຳ ແລະ ການຄຸ້ມຄອງແຮງງານລາວ ແລະ ແຮງງານຕ່າງປະເທດ;

3. ຕິດຕາມ, ກວດກາ, ປະເມີນຜົນ ແລະ ລາຍງານການຄຸ້ມຄອງການອອກແຮງງານ, ດຳເນີນການໄກ່ເກ່ຍຂໍ້ຂັດແຍ່ງກ່ຽວກັບແຮງງານ, ປະຕິບັດລະບຽບຕໍ່ຜູ້ລະເມີດ, ຕາມສິດພາລະບົດບາດ;

4. ຊີ້ນຳ ຕິດຕາມ ແລະ ຄຸ້ມຄອງການເຄື່ອນໄຫວຂອງບັນດາວິສະຫະກິດ, ສະມາຄົມ ແລະ ມູນນິທິຕ່າງໆກ່ຽວກັບການອອກແຮງງານ ທີ່ໄດ້ຮັບການສ້າງຕັ້ງຂຶ້ນໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

5. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍແຮງງານ ແລະ ລະບຽບການຄຸ້ມຄອງແຮງງານ.

**ມາດຕາ 47 (ໃໝ່) ສິດ ແລະ ໜ້າທີ່ຂອງສະຫະພັນກຳມະບານແຂວງ**

1. ປະສານສົມທົບກັບ ພາກສ່ວນກ່ຽວຂ້ອງ, ພະແນກແຮງງານ ແລະ ສະຫວັດດີການສັງຄົມໃນການຕິດຕາມ, ກວດກາ, ປະເມີນຜົນ ແລະ ລາຍງານການຄຸ້ມຄອງແຮງງານ ແລະ ກຳມະກອນຜູ້ຜະລິດກະສິກຳຕາມສັນຍາ ໃຫ້ຖືກຕ້ອງຕາມລະບຽບການກຳມະບານກຳນົດ;

2. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍແຮງງານ ແລະ ລະບຽບການຄຸ້ມຄອງແຮງງານ.

**ມາດຕາ 48 (ປັບປຸງ) ສິດ ແລະ ໜ້າທີ່ຂອງກອງບັນຊາການ ປກສ ແຂວງ**

1. ຄຸ້ມຄອງ, ກວດກາ, ສືບສວນ ສອບສວນ ນຳໃຊ້ມາດຕະການ ຕໍ່ຄົນຕ່າງປະເທດ ທີ່ລະເມີດຕໍ່ກັບກົດໝາຍ ແລະ ລະບຽບການ ຂອງ ສ ປປ ລາວ;

2. ຄຸ້ມຄອງ, ຊີ້ນຳ, ບັນຊາ, ຕິດຕາມ, ກວດກາ ແລະ ປະເມີນຜົນ, ຄົ້ນຄ້ວຂຶ້ນທະບຽນພັກເຊົາ, ອອກບັດອະນຸຍາດພັກເຊົາ ຂອງຄົນຕ່າງປະເທດ;

3. ກວດກາຄົນເຂົ້າ-ອອກເມືອງ, ຄຸ້ມຄອງ, ຕິດຕາມ, ກວດກາ, ອານຸຍາດການພັກເຊົາ ແລະ ການເຄື່ອນໄຫວ ຂອງຄົນລາວ, ຄົນຕ່າງປະເທດ;

4. ເຜີຍແຜ່ກົດໝາຍ, ລະບຽບການ ທີ່ກ່ຽວຂ້ອງ, ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ກັກຕົວ ແລະ ດຳເນີນການສອບຖາມເອົາຂໍ້ມູນຫຼັກຖານເບື້ອງຕົ້ນ ຈາກບຸກຄົນທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

5. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 49 (ປັບປຸງ) ສິດ ແລະ ໜ້າທີ່ຂອງເຈົ້າເມືອງ**

1. ເປັນເຈົ້າການນຳເອົາ ຂໍ້ຕົກລົງ ສະບັບນີ້ ເຜີຍແຜ່ເຊື່ອມຊຶມ ໃຫ້ບັນດາ ຫ້ອງການກ່ຽວຂ້ອງຂອງເມືອງ, ບັນດາບ້ານ ທີ່ຂຶ້ນກັບເມືອງຂອງຕົນ ໃຫ້ຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ;

2. ຢັ້ງຢືນຄຳຮ້ອງຂໍລົງທຶນຂອງຜູ້ລົງທຶນໃນໂຄງການລົງທຶນດ້ານກະສິກຳ ຕາມຮູບແບບສັນຍາຕາມທີ່ກຳນົດໄວ້ໃນ ມາດຕາ 17 ຂໍ້ 2). ຂອງຂໍ້ຕົກລົງສະບັບນີ້;

3. ຊີ້ນຳ, ຕິດຕາມ, ກວດກາ, ປະເມີນຜົນ ແລະ ລາຍງານ ຂອງບັນດາຫ້ອງການກ່ຽວຂ້ອງຂອງເມືອງທີ່ມີຄວາມຮັບຜິດຊອບຕໍ່ການລົງທຶນ ດ້ານກະສິກຳຕາມຮູບແບບສັນຍາ ຢູ່ພາຍໃນເມືອງຕົນ ໃຫ້ມີຄວາມຖືກຕ້ອງຕາມກົດໝາຍ-ລະບຽບການ;

4. ເປັນເຈົ້າການປົກປ້ອງ ແລະ ແກ້ໄຂຂໍ້ຂັດແຍ້ງຕ່າງໆ ທີ່ເກີດຂຶ້ນ ຢູ່ພາຍໃນໂຄງການ ໃຫ້ມີຄວາມສະຫງົບ;

5. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 50 (ປັບປຸງ) ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ**

1. ເປັນເຈົ້າການໂຄສະນາເຜີຍແຜ່ ຂໍ້ຕົກລົງສະບັບນີ້ ແລະ ລະບຽບ ກົດໝາຍທີ່ກ່ຽວຂ້ອງໃຫ້ປະຊາຊົນຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ;

2. ຢັ້ງຢືນຄວາມຖືກຕ້ອງ ຂອງສິດໃຊ້ເພື່ອໃຫ້ຂະແໜງການຫັນປ່ຽນມາເປັນສິດນຳໃຊ້ທີ່ດິນ ແລະ ສິດນຳໃຊ້ທີ່ດິນ ໃຫ້ປະຊາຊົນຜູ້ເຂົ້າຮ່ວມໂຄງການ;

3. ຢັ້ງຢືນດ້ວຍຄວາມຮັບຜິດຊອບຕໍ່ຄຳຮ້ອງຂອງຜູ້ລົງທຶນໃນໂຄງການລົງທຶນດ້ານກະສິກຳຕາມຮູບແບບສັນຍາ ຕາມທີ່ກຳນົດໄວ້ໃນ ມາດຕາ 17 ຂໍ້ 2). ຂອງຂໍ້ຕົກລົງສະບັບນີ້;

4. ຄຸ້ມຄອງປະຊາຊົນພາຍໃນບ້ານຜູ້ທີ່ມີຄວາມຕ້ອງການ ແລະ ສະໝັກໃຈເຂົ້າຮ່ວມໂຄງການລົງທຶນດ້ານກະສິກຳໃນຕາມຮູບແບບສັນຍາ ໃຫ້ຖືກຕ້ອງຕາມຂໍ້ຕົກລົງ ສະບັບນີ້;

5. ເປັນຜູ້ຈັດເກັບຄ່າທຳນຽມນຳໃຊ້ທີ່ດິນ (ພາສີທີ່ດິນ) ປະຈຳປີ ນຳປະຊາຊົນຜູ່ທີ່ນຳເອົາເນື້ອທີ່ດິນເຂົ້າຮ່ວມ ໂຄງການ ໃຫ້ຄົບຖ້ວນ ແລະ ຖືກຕ້ອງຕາມລະບຽບການ;

6. ຢັ້ງຢືນສັນຍາຜູກພັນດ້ານຜົນປະໂຫຍດ (ສັນຍາສອງລົ້ນ) ລະຫວ່າງຜູ້ລົງທຶນ ແລະ ປະຊາຊົນທີ່ເຂົ້າຮ່ວມໂຄງການ ໃຫ້ຖືກຕ້ອງຕາມກົດໝາຍ - ລະບຽບການ ແລະ ຮັບປະກັນຜົນປະໂຫຍດທັງສອງຝ່າຍຢ່າງເໝາະສົມ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ການກວດກາການລົງທຶນດ້ານກະສິກຳຕາມຮູບແບບສັນຍາ

**ມາດຕາ 51 ການກວດກາ**

1. ການກວດກາພາຍໃນແມ່ນກຳນົດໄວ້ໃນມາດຕາ 39 ຂອງຂໍ້ຕົກລົງສະບັບນີ້ປະກອບມີ: ພະແນກແຜນການ ແລະ ການລົງທຶນແຂວງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ພະແນກການເງິນແຂວງ, ພະແນກສາທາລະນະສຸກແຂວງ, ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ສະຫະພັນກຳມະບານແຂວງ, ກອງບັນຊາການ ປກສ ແຂວງ, ເຈົ້າເມືອງ ແລະ ອົງການປົກຄອງບ້ານ;

2. ການກວດກາພາຍນອກ ແມ່ນສະພາປະຊາຊົນແຂວງ ອົງການກວດກາລັດ ແລະ ອົງການຈັດຕັ້ງມະຫາຊົນ.

**ມາດຕາ 52 ເນື້ອໃນການກວດກາ**

1. ຈັດຕັ້ງການກວດກາ, ໜ້າວຽກ, ຊຸກຍູ້ສົ່ງເສີມ, ອຳນວຍຄວາມສະດວກ, ຄວບຄຸມ ແລະ ຕິດຕາມກວດກາ ການເຄື່ອນໄຫວ ປະຕິບັດໜ້າທີ່ໃນການຄຸ້ມຄອງການລົງທຶນ;

2. ພິຈາລະນາ, ໃຫ້ຄຳແນະນຳ, ແກ້ໄຂຄຳສະເໜີຂອງປະຊາຊົນ ຜູ້ລົງທຶນ ການຈັດຕັ້ງກ່ຽວກັບການຄຸ້ມຄອງການລົງທຶນ ໃຫ້ຖືກຕ້ອງ ແລະ ເປັນທຳ.

**ມາດຕາ 53 ຮູບການກວດກາ ມີ 3 ຮູບແບບຄື**

1. ການກວດກາປົກກະຕິ ແມ່ນການກວດກາດຳເນີນໄປຕາມໂຄງການ, ແຜນການ, ແຜນງານທີ່ໄດ້ກຳນົດເວລາ ອັນແນ່ນອນ;

2. ການກວດກາໂດຍມີການແຈ້ງລ່ວງໜ້າ: ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນໂດຍແຈ້ງ ໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ແມ່ນການກວດການອກແຜນ, ມີຄວາມຈໍາເປັນທີ່ຮີບດ່ວນໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 54 (ປັບປຸງ) ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ, ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຜົນງານດີເດັ່ນໃນການປະຕິບັດ ຂໍ້ຕົກລົງສະບັບນີ້ ເປັນຕົ້ນການລົງທຶນທີ່ມີປະສິດທິຜົນ, ປະກອບສ່ວນຕໍ່ການພັດທະນາເສດຖະກິດ-ສັງຄົມ, ສ້າງວຽກເຮັດງານທໍາ, ດຶງດູດ ແລະ ຊຸກຍູ້ໃຫ້ເກີດມີການລົງທຶນ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 55 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກດໍາເນີນຄະດີອາຍາແລ້ວແຕ່ກໍລະນີສະຖານເບົາ ຫຼື ໜັກ ຕາມກົດຫມາຍ.

**ມາດຕາ 56 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ເປັນຕົ້ນ: ຂໍ້ຫ້າມທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍທີ່ມີມູນຄ່າຕໍ່າກວ່າ ຫ້າແສນກີບ ແຕ່ຫາກມີຄວາມຈິງໃຈລາຍງານ, ຮັບສາລະພາບຕໍ່ການກະທໍາ ແລະ ສົ່ງຊັບສິນຫຼືຂອງກາງທີ່ໄດ້ມາໂດຍທີ່ບໍ່ຖືກຕ້ອງ ຈະຖືກຕັກເຕືອນ ແລະ ສຶກສາອົບຮົມ ສົ່ງຊັບສິນຄືນ ແລະ ອື່ນໆ.

**ມາດຕາ 57 ມາດຕະການທາງວິໄນ**

ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ໄດ້ລະເມີດຕໍ່ຂໍ້ຕົກລົງ ສະບັບນີ້ເປັນຕົ້ນ: ຂໍ້ຫ້າມ ທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍທີ່ມີມູນຄ່າສູງກວ່າ ຫ້າແສນກີບແຕ່ຫາກບໍ່ມີຄວາມຈິງໃຈລາຍງານ,ຫຼົບຫຼີກຄວາມຜິດຂອງຕົນຈະຖືກປະຕິບັດວິໄນຕາມແຕ່ລະກໍລະນີດີ:

1. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
2. ປົດຕໍາແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີໜ້າທີ່ຕໍາແໜ່ງຕໍ່າກວ່າ;
3. ໃຫ້ອອກຈາກລັດຖະກອນໂດຍບໍ່ໄດ້ຮັບນະໂຍບາຍໃດໆ, ພ້ອມສົ່ງຊັບສິນທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງ ນັ້ນຄືນໃຫ້ ການຈັດຕັ້ງຄົບຖ້ວນ.

**ມາດຕາ 58 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຊຶ່ງໄດ້ກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຈະໄດ້ຖືກປັບໃໝຕາມກໍລະນີການກະທໍາຜິດ ທີ່ໄດ້ກໍານົດໄວ້ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 59 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຊຶ່ງໄດ້ກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນຕາມກົດໝາຍວ່າດ້ວຍການ ດໍາເນີນຄະດີແພ່ງ.

**ມາດຕາ 60 ມາດຕະການທາງອາຍາ**

ບຸກຄົນ ນິຕິບຸກຄົນ ແລະ ການຈັດຕັ້ງທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກດຳເນີນຄະດີ ແລະ ລົງໂທດຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 61 ການຈັດຕັ້ງປະຕິບັດ**

ອົງການປົກຄອງແຂວງ, ອົງການປົກຄອງເມືອງ, ອົງການປົກຄອງບ້ານ, ຜູ້ລົງທຶນ ແລະ ປະຊາຊົນທີ່ກ່ຽວຂ້ອງ ເປັນຜູ້ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ, ຂໍ້ຕົກລົງ, ລະບຽບການໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ;

**ມາດຕາ 62 (ປັບປຸງ) ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງ ເລກທີ 486/ຂບຊ, ລົງວັນທີ 06 ກັນຍາ 2019 ແລະ ມີຜົນສັກສິດພາຍຫຼັງ ທ່ານເຈົ້າແຂວງບໍລິຄຳໄຊ ໄດ້ລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການສິບຫ້າວັນ.

**ເຈົ້າແຂວງ**

ແຂວງບໍລິຄຳໄຊ
ເຈົ້າແຂວງ

ປອ. ກອງແກ້ວ ໄຊສົງຄາມ